# ບົດຮຽນໂຮງຮຽນວັນອາທິດ

## ວັນອາທິດ ທີ 09 ເດືອນຕຸລາ 2022 (10-09-2022 )

## ຄວາມເຊື່ອສະແດງອອກໃນລຳດັບຄວາມສຳຄັນຂອງທ່ານ

*ເມື່ອໃດທີ່ມີການປ່ຽນແປງທີ່ບໍ່ຄາດຄິດ ໄດ້ກາຍມາເປັນແຜນການທີ່ດີກວ່າເດີມ?*

**ຈຸດສຳຄັນໃນບົດຮຽນ:** ບໍ່ວ່າຈະມີຫຍັງເກີດຂຶ້ນຂ້າງໜ້າ, ຈົ່ງຮັກສາຄວາມໄວ້ວາງໃຈຂອງທ່ານ ແລະການເພິ່ງພາອາສັຍພຣະເຈົ້າ.

**ພຣະຄັມພີຕອບສນອງຕໍ່ຊີວິດ:**

ໂອແລຟ (Olaf), ມະນຸດຫິມມະ(snowman)ໃນຮູບເງົາ ເຣື່ອງ "ແຊ່ແຂງ" ("Frozen") ຝັນຢາກອອກຈາກມື້ທີ່ຍຸ້ງຍາກຂອງລະດູໜາວ ແລະປະສົບກັບຄວາມອົບອຸ່ນຂອງລະດູຮ້ອນ. ບັນດາຜູ້ຊົມໄດ້ເຂົ້າໄປໃນຝັນກາງເວັນຂອງລາວໃນຂນະທີ່ລາວຮ້ອງເພງທີ່ມີຊື່ວ່າ **"ໃນລະດູຮ້ອນ"** ກ່ຽວກັບສິ່ງມະຫັສຈັນທັງໝົດທີ່ລາວໄດ້ຍິນກ່ຽວກັບລະດູຮ້ອນ. ລາວຮ້ອງເພງກ່ຽວກັບການເປົ່າຟອງຝອຍສະບູຈາກສນາມຫຍ້າ, ນອນຢູ່ເທິງຫາດຊາຍພາຍໃຕ້ຄັນຮົ່ມ, ພາຍເຮືອຄານູ (canoe) ໃນທະເລສາບ, ລອຍນ້ຳ, ພັກຜ່ອນໃນອ່າງນ້ຳຈາຄູຊີ (jacuzzi), ເຕັ້ນລຳພາຍໃຕ້ສາລາພັກເຊົາ(gazebo), ໄປກິນເຂົ້າປ່າ (picnic), ແລະສັມຜັດກັບຄວາມອົບອຸ່ນຂອງດວງຕາເວັນ.

ແມ້ແຕ່ເດັກນ້ອຍທີ່ເບິ່ງຮູບເງົາກໍຮູ້ດີຢ່າງແນ່ນອນວ່າຈະເກີດຫຍັງຂຶ້ນກັບ ໂອແລຟ ຖ້າລາວໄດ້ຮັບຄວາມປາຖນາຂອງລາວ. ແຕ່ວ່າ, ມະນຸດຫິມມະທີ່ໜ້າຮັກ, ແລະໄຮ້ດຽງສາຈະບໍ່ສຳນຶກໄດ້ເລີຍວ່າລາວຈະບໍ່ເຫັນລະດູຮ້ອນຈັກເທື່ອເລີຍ ເພາະວ່າລາວຈະລະລາຍ (ເປື່ອຍເປັນນ້ຳ)ໃນລະດູໃບໄມ້ປົ່ງ.

ພວກເຮົາບໍ່ແມ່ນຕົວລະຄອນຕົວປອມທີ່ເໝືອນມີຊີວິດ, ແຕ່ພວກເຮົາຍັງສາມາດຜິດພາດກ່ຽວກັບອະນາຄົດ ແລະສິ່ງທີ່ພວກເຮົາວາງແຜນທີ່ຈະເຮັດ. **<u>ເມື່ອສິ່ງນັ້ນເກີດຂຶ້ນ ພວກເຮົາຈະຕອບສນອງຕໍ່ເຫດການແນວໃດ</u>?** ໃນຊ່ວງສຸດທ້າຍນີ້ຈາກປຶ້ມພຣະຄັມພີຢາໂກໂບ, ພວກເຮົາຈະເຫັນບ່ອນທີ່ຈຸດສຸມ(focus)ຂອງພວກເຮົາສົມຄວນຈະຢູ່ສະຖານທີ່ໃດ ໃນຂນະທີ່ພວກເຮົາວາງແຜນສຳລັບອະນາຄົດ.

**ພຣະຄັມພີກ່າວວ່າແນວໃດ?** (ເບິ່ງຕາມຫົວຂໍ້ 1, 2, ແລະ 3,)

### ການສຶກສາພຣະຄັມພີ

### 1. <u>ຢາໂກໂບ 4:13-17</u>

*13 ດັ່ງນີ້ແຫລະ, ເຈົ້າທັງຫລາຍທີ່ເຄີຍເວົ້າວ່າ, "ມື້ນີ້ຫລືມື້ອື່ນພວກເຮົາຈະເຂົ້າໄປໃນເມືອງນັ້ນເມືອງນີ້, ຈະພັກຢູ່ທີ່ນັ້ນປີນຶ່ງ, ແລະຈະ*
*ຄ້າຂາຍເອົາກຳໄລ." 14 ແຕ່ພວກເຈົ້າບໍ່ຮູ້ເຣື່ອງຂອງມື້ອື່ນ ວ່າຊີວິດຂອງພວກເຈົ້າຈະເປັນຢ່າງໃດ ກໍເປັນເໝືອນນ້ຳໝອກທີ່ປາກົດຢູ່ຊົ່ວ*
*ຄາວ ແລ້ວກໍຫາຍໄປ. 15 ແທນທີ່ຈະເວົ້າຢ່າງນັ້ນ ພວກເຈົ້າຄວນເວົ້າວ່າ, "ຖ້າພຣະເຈົ້າຊົງເຫັນຊອບ ພວກເຮົາຈະມີຊີວິດຢູ່ແລະຈະເຮັດ*
*ສິ່ງນີ້ຫລືສິ່ງນັ້ນ." 16 ແຕ່ວ່າດຽວ ນີ້ເຈົ້າທັງຫລາຍໂອ້ອວດດ້ວຍຄວາມຖືຕົວ ການໂອ້ອວດຢ່າງນີ້ກໍລ້ວນເປັນແຕ່ຄວາມຊົ່ວ. 17 ເຫດສັນນີ້*
*ຜູ້ໃດຮູ້ວ່າອັນໃດເປັນການດີແລະບໍ່ເຮັດ ຜູ້ນັ້ນຈຶ່ງມີບາບ.*

ບໍ່ມີຫຍັງຜິດສຳລັບການວາງແຜນລ່ວງໜ້າ. ຄວາມຈິງແລ້ວ, ພຣະຄັມພີມີສຸພາສິດຫຼາຍຂໍ້ຊຶ່ງໜຸນນ້ຳໃຈໃຫ້ພວກເຮົາວາງແຜນການດັ່ງຕໍ່ລົງໄປນີ້:

- ປຽບເໝືອນຕົວມົດ, ບັນດາຄົນທີ່ສລາດວາງແຜນການ ແລະຈັດຕຽມລຳດັບເວລາທີ່ຈຳເປັນ (ສພສ 6:6-11).

- ບັນດາຄົນທີ່ສລາດຍ່ອມປະກອບດ້ວຍຜູ້ໃຫ້ຄໍາປຶກສາໃນເວລາວາງແຜນການ (ສພສ 15:22; 20:18).
- ບັນດາຄົນທີ່ດຸໝັ່ນເຮັດແຜນການ, ຊຶ່ງນໍາໄປສູ່ຄວາມອຸດົມສົມບູນ (ສພສ 21:5).

ຢູ່ໃນຂ່າວປະເສີດມັດທາຍ, ພຣະເຢຊູຊົງໄດ້ບອກໃນຄໍາອຸປມາກ່ຽວກັບເລື່ອງ ສາວປອດສິບຄົນ (ຄົນໂງ່ 5 ຄົນ ແລະ ຄົນສລາດ 5 ຄົນ). ພຣະເຢຊູຊົງເອີ້ນຜູ້ໄປງານແຕ່ງດອງທີ່ບໍ່ໄດ້ຕຽມພ້ອມວ່າ "**ຄົນໂງ່**" ແຕ່ພຣະອົງຊົງເອີ້ນຄົນທີ່ຕຽມພ້ອມວ່າ "**ຄົນສລາດ**" (ມັດທາຍ 25:1-13). ພຣະເຢຊູຍັງໄດ້ຊົງກ່າວເຖິງສະຕິປັນຍາຂອງການວາງແຜນ ດັ່ງທີ່ພຣະອົງໄດ້ຊົງເອີ້ນຜູ້ຄົນໃຫ້ນັບຄໍານວນເບິ່ງລາຍຈ່າຍຂອງການຕິດຕາມພຣະອົງ (ລກ 14:28-33).

**ການວາງແຜນແມ່ນສໍາຄັນ**, ແຕ່ວ່າການວາງແຜນກໍຍັງຜິດພາດໄດ້ເຊັ່ນດຽວກັນ. ໃນທຸຣະກິດ, ແມ້ແຕ່ບັນດາຜູ້ບໍຣິຫານທີ່ສລາດທີ່ສຸດກໍຍັງບໍ່ຮູ້ວ່າອະນາຄົດຈະເປັນຢ່າງໃດ. ມີແຕ່ພຽງພຣະເຈົ້າເທົ່ານັ້ນທີ່ຊົງຮູ້ອະນາຄົດ, ແລະພຣະເຈົ້າເທົ່ານັ້ນທີ່ບໍ່ຊົງສາມາດຜິດພາດໄດ້. ຄວາມຈິງເຫຼົ່ານີ້ສົມຄວນເຮັດໃຫ້ແມ້ກະທັ້ງນັກວາງແຜນທີ່ໝັ້ນໃຈທີ່ສຸດໃຫ້ມີຄວາມອອ່ນນ້ອມຖ່ອມຕົນ. ຢ່າງໃດກໍຕາມ, ນັກທຸຣະກິດໃນຕົວຢ່າງຂອງ ຢາໂກໂບ ຂາດຄວາມຖ່ອມຕົວແລະວາງແຜນຂອງພວກເຂົາຄືກັນກັບວ່າພວກເຂົາຮູ້ອະນາຄົດຢ່າງໝັ້ນໃຈ. ແຜນການແມ່ນສິ່ງທີ່ດີ, ແຕ່ວ່າຄົນເຫຼົ່ານີ້ໄດ້ອວດອ້າງໃນຄວາມຈອງຫອງຂອງພວກເຂົາ. ການກະທໍາທີ່ແທ້ຈິງຂອງພວກເຂົາບໍ່ແມ່ນວ່າພວກເຂົາໄດ້ວາງແຜນ; ມັນແມ່ນວ່າພວກເຂົາຄິດວ່າພວກເຂົາຮູ້ ຫຼືສາມາດຄວບຄຸມອະນາຄົດໄດ້.

*ລະດູການໂຄວິດ ມີຜົນກະທົບຕໍ່ການວາງແຜນອະນາຄົດຂອງທ່ານແນວໃດ?*

ບໍ່ພຽງແຕ່ນັກທຸຣະກິດໃນຕົວຢ່າງຂອງຢາໂກໂບທີ່ບໍ່ຮູ້ວ່າອະນາຄົດຈະເປັນແນວໃດເຊັ່ນດຽວກັນ, ພວກເຂົາເຈົ້າບໍ່ໄດ້ຮູ້ແມ້ແຕ່ວ່າພວກເຂົາເຈົ້າຈະມີອະນາຄົດ. ຊີວິດ, ທ່ານຢາໂກໂບໄດ້ເຕືອນ, ມັນເປັນພຽງແຕ່ນໍ້າໝອກທີ່ຢູ່ທີ່ນີ້ສໍາລັບຊົ່ວຄາວແລະຫຼັງຈາກນັ້ນກໍຫາຍໄປ. ພຣະເຈົ້າເທົ່ານັ້ນທີ່ຮູ້ວ່າພວກເຮົາຈະມີຊີວິດຢູ່ດົນປານໃດ (ໂຢບ 14:1-6). ສແຕນ ເກີແລັກ (Stan Gerlach) ໄດ້ກ່າວຈຸດນີ້ຂນະທີ່ລາວໄດ້ກ່າວຄໍາຊົມເຊີຍ ແລະ ໄດ້ສເນີຂ່າວປະເສີດຢູ່ໃນງານສົບ. ລາວເວົ້າວ່າ, "ເຈົ້າບໍ່ຮູ້ດອກວ່າພຣະເຈົ້າຈະເອົາຊີວິດຂອງທ່ານໄປເມື່ອໃດ. ໃນຂນະນັ້ນເອງ, ບໍ່ມີຫຍັງທີ່ທ່ານສາມາດເຮັດໄດ້ກ່ຽວກັບມັນ. ເຈົ້າພ້ອມແລ້ວບໍ?" ເມື່ອລາວເວົ້າຈົບລາວກໍນັ່ງລົງແລະເສັຽຊີວິດທັນທີ, ສະມາຊິກໃນຄອບຄົວຂອງລາວໄດ້ພະຍາຍາມຟື້ນຄືນຊີວິດແຕ່ບໍ່ສາມາດເຮັດໄດ້.

ຊີວິດມີຄ່າ ແລະອ່ອນແອ. ພວກເຮົາສົມຄວນວາງແຜນ, ແຕ່ພວກເຮົາຕ້ອງຍອມໃຫ້ແຜນການຂອງພວກເຮົາເປັນໄປຕາມພຣະປະສົງຂອງອົງພຣະເຈົ້າ. ພວກເຮົາບໍ່ໄດ້ວາງໃຈໃນແຜນການຂອງພວກເຮົາ. **ພວກເຮົາວາງໃຈໃນພຣະເຈົ້າ, ຍອມຈໍານົນແຜນການຂອງພວກເຮົາຕໍ່ພຣະປະສົງຂອງພຣະອົງ.**

## 2. ຢາໂກໂບ 5:7-9

*7 ເຫດສັນນັ້ນພີ່ນ້ອງທັງຫລາຍເອີຍ, ຈົ່ງມີໃຈອົດທົນຈົນກວ່າອົງພຣະຜູ້ເປັນເຈົ້າຈະສະເດັດມາ. ຈົ່ງເບິ່ງ, ຊາວປູກຝັງທີ່ລໍຄອຍຜົນອັນມີຄ່າ ທີ່ຈະໄດ້ຮັບຈາກແຜ່ນດິນ ເຂົາພຽນຄອຍຈົນກວ່າມີຝົນຕົ້ນຣະດູແລະຝົນປາຍຣະດູ. 8 ພວກເຈົ້າກໍຈົ່ງອົດທົນຢ່າງນັ້ນເໝືອນກັນ ຈົ່ງຕັ້ງອົກຕັ້ງໃຈໃຫ້ດີ ເພາະໃກ້ຈະເຖິງເວລາທີ່ອົງພຣະຜູ້ເປັນເຈົ້າຈະສະເດັດມາແລ້ວ. 9 ພີ່ນ້ອງທັງຫລາຍເອີຍ, ຢ່າຈົ່ມຕໍ່ກັນແລະກັນ ເພື່ອພວກເຈົ້າຈະບໍ່ຖືກຊົງພິພາກສາ. ນີ້ແຫລະ, ພຣະອົງຜູ້ຊົງພິພາກສາຊົງປະທັບຢືນຢູ່ທີ່ປະຕູແລ້ວ.*

ໃນຂໍ້ພຣະຄັມພີຊ່ວງທີ່ກ່າວກ່ອນພາກນີ້, ຢາໂກໂບໄດ້ຕໍາໜິຕິຕຽນຄົນຮັ່ງມີທີ່ເອົາຊັບສົມບັດຂອງເຂົາເຈົ້າອອກມາຈາກຫຼັງຄົນງານ(ຂູດຮີດລູກຈ້າງຂອງຕົນ) ໃນຂນະທີ່ພວກເຂົາເຈົ້າເອງດໍາເນີນຊີວິດຕາມໃຈຕົນເອງ. ບັນດາຄົນກຸ່ມນີ້ຈະຮວມເຖິງຊາວກະສິກອນທີ່ບໍ່ຍຸຕິທັມຜູ້ທີ່ສນັບສນຸນວິຖີຊີວິດແບບຟູມເຟືອຍຂອງພວກເຂົາເຈົ້າໂດຍການຈ່າຍຄ່າແຮງງານທີ່ບໍ່ຍຸຕິທັມແລະການໃຊ້ອໍານາດຂອງພວກເຂົາໃນທາງຜິດເພື່ອກ່າວໂທດຜູ້ທີ່ຕໍ່ຕ້ານພວກເຂົາ. ຊາວກະສິກອນທີ່ບໍ່ຍຸຕິທັມອາດຈະຄວບຄຸມຄົນງານຂອງລາວຢ່າງບໍ່ຍຸຕິທັມ, ແຕ່ລາວບໍ່ສາມາດຄວບຄຸມຝົນໄດ້. ເຊັ່ນດຽວກັບທີ່ນັກທຸຣະກິດໃນ ຢາໂກໂບ 4:13-17 ຈໍາເປັນຕ້ອງເພິ່ງພາອາສັຍພຣະເຈົ້າເພາະວ່າພວກເຂົາບໍ່ສາມາດຄາດເດົາອະນາຄົດໄດ້ຢ່າງເຕັມສ່ວນ, ຊາວກະສິກອນຍັງຕ້ອງເພິ່ງພາໃສ່ພຣະເຈົ້າເພາະວ່າພຣະອົງເທົ່ານັ້ນສາມາດຜລິດຝົນທີ່ພວກເຂົາເຈົ້າຕ້ອງການຈຶ່ງຈະປະສົບຜົນສໍາເລັດ. ປາສຈາກຝົນຕົກແລ້ວ, ຊາວກະສິກອນຈະບໍ່ມີຊີວິດຢູ່ລອດໄດ້. ເມື່ອຝົນຕົກມາ,

ພືດພັນກໍຈະເລີນຮຸ່ງເຮືອງ. ຜູ້ທໍານວາຍເຢເຣມີຢາໄດ້ວາດພາບກ່ຽວກັບສິ່ງທີ່ເກີດຂຶ້ນໃນເວລາທີ່ຝົນບໍ່ຕົກ: ຄວາມແຫ້ງແລ້ງນໍາໄປສູ່ຄວາມໂສກເສົ້າ, ຄວາມອັບອາຍ, ແລະ ຄວາມເສັ່ງກຽດສັກສີ (ຢຣມ 14:1-4). ຝົນເປັນສິ່ງຈໍາເປັນ, ແຕ່ພຣະເຈົ້າເທົ່ານັ້ນທີ່ສາມາດສົ່ງຝົນລົງມາສູ່ພື້ນດິນ. <u>ພວກເຮົາເພິ່ງພາພຣະເຈົ້າໃນສິ່ງທີ່ພວກເຮົາຈໍາເປັນແລະທຸກສິ່ງທີ່ພວກເຮົາມີ</u>.

ຊາວນາທີ່ອົດທົນຮູ້ວ່າລາວບໍ່ຍອມແພ້, ແຕ່ລາວອົດທົນລໍຖ້າໃຫ້ພຣະເຈົ້າສົ່ງຝົນມາໃຫ້ລ້ຽງພືດ. ຢາໂກໂບປະກາດວ່າ, "*ຈົ່ງເບິ່ງ, ຊາວປູກຝັງທີ່ລໍຄອຍຜົນອັນມີຄ່າ ທີ່ຈະໄດ້ຮັບຈາກແຜ່ນດິນ ເຂົາພຽນຄອຍຈົນກວ່າມີຝົນຕົ້ນຣະດູແລະຝົນປາຍຣະດູ.*" (ຂໍ້ 7). ລາວເຊື່ອວ່າພຣະເຈົ້າຈະສົ່ງປະຣິມານ(ຈໍານວນ)ຝົນທີ່ຈໍາເປັນຕາມເວລາທີ່ເໝາະສົມ. ໃນທາງດຽວກັນ, ພວກເຮົາຕ້ອງອົດທົນໃນຂນະທີ່ພວກເຮົາລໍຖ້າການສະເດັດມາຂອງພຣະຜູ້ເປັນເຈົ້າ. ເໝືອນດັ່ງຊາວນາບໍ່ຮູ້ວ່າຝົນຈະມາເມື່ອໃດ, ດັ່ງນັ້ນພວກເຮົາຈຶ່ງບໍ່ຮູ້ວ່າພຣະຜູ້ເປັນເຈົ້າຈະກັບຄືນມາເມື່ອໃດ (ມາຣະໂກ 13:32). ສິ່ງທີ່ພວກເຮົາຮູ້ແມ່ນວ່າພຣະອົງຈະກັບຄືນມາເພາະວ່າພຣະເຢຊູໄດ້ສັນຍາວ່າພຣະອົງຈະສະເດັດກັບມາ (ຢຮ 14:3).

ຢາໂກໂບໄດ້ຂຽນໄວ້ວ່າ, "ການສະເດັດມາຂອງພຣະຜູ້ເປັນເຈົ້າໃກ້ເຂົ້າມາແລ້ວ." ຢາໂກໂບໄດ້ຂຽນຄວາມຈິງນີ້ເມື່ອປະມານສອງພັນປີກ່ອນ, ແລະຍ້ອນວ່າພວກເຮົາຄິດເປັນຊົ່ວໂມງແລະວັນ, ພວກເຮົາອາດຈະຄິດວ່າຢາໂກໂບພາດເປົ້າໝາຍໄປ. ແຕ່ຄວາມຢູ່ໃກ້ຊິດແມ່ນຄໍາສັບທີ່ສໍາພັນກັນ, ແລະອັຄສາວົກເປໂຕໄດ້ຊຸກຍູ້ຜູ້ອ່ານຂອງເພິ່ນບໍ່ໃຫ້ "ເບິ່ງຂ້າມຂໍ້ເທັດຈິງອັນນີ້: ສໍາລັບພຣະຜູ້ເປັນເຈົ້າມື້ນຶ່ງເປັນຄືພັນປີ ແລະພັນປີຄືກັບມື້ນຶ່ງ" (2 ປຕ 3:8). ເວລາແນ່ນອນໃດທີ່ພຣະເຢຊູຈະມາບໍ່ແມ່ນຈຸດສໍາຄັນ; ສິ່ງທີ່ພຣະອົງຈະມາເປັນຈຸດສໍາຄັນ. <u>ຜູ້ເຊື່ອໃນສະຕະວັດທໍາອິດຈໍາເປັນຕ້ອງໄດ້ຮັບການກະກຽມ</u>, ແລະພວກເຮົາກໍເຊັ່ນດຽວກັນ (ຈໍາເປັນຕ້ອງກະກຽມ). ພວກເຮົາຕ້ອງອົດທົນກັບຄວາມຊົ່ວຮ້າຍເປັນຊົ່ວລະຍະນຶ່ງ, ແຕ່ພຣະຄຣິດຈະສະເດັດກັບຄືນມາແລະຊົງຈັດຕຽມສິ່ງຕ່າງໆໃຫ້ຖືກຕ້ອງໃນອານາຈັກນິຣັນດອນຂອງພຣະອົງ. ຄວາມຈິງນັ້ນຄວນຊຸກຍູ້ພວກເຮົາໃຫ້ອົດທົນ ແລະເສີມສ້າງຈິດໃຈຂອງພວກເຮົາທັງຫລາຍ.

*ມີວິທີປະຕິບັດໃດທີ່ພວກເຮົາສາມາດຮັບປະກັນວ່າແຜນການຂອງເຮົາສອດຄ່ອງກັບນໍ້າພຣະທັຍຂອງພຣະເຈົ້າ?*

## 3. <u>ຢາໂກໂບ 5:10-11</u>

*[10] ພີ່ນ້ອງທັງຫລາຍເອີຍ, ຈົ່ງເອົາແບບຢ່າງໃນການທົນທຸກ ແລະຄວາມພາກພຽນຂອງພວກຜູ້ປະກາດພຣະທັມ ຜູ້ໄດ້ກ່າວຄວາມໃນ*
*ພຣະນາມຂອງອົງພຣະຜູ້ເປັນເຈົ້າ. [11] ເບິ່ງແມ, ພວກເຮົາຖືວ່າຄົນເຫລົ່ານັ້ນທີ່ມີຄວາມໝັ້ນໃຈກໍເປັນສຸກ ເຈົ້າທັງຫລາຍໄດ້ຍິນເລື່ອງ*
*ຄວາມໝັ້ນໃຈຂອງທ່ານໂຢບ ແລະໄດ້ເຫັນແລ້ວວ່າໃນທີ່ສຸດປາຍນັ້ນ ອົງພຣະຜູ້ເປັນເຈົ້າກໍຊົງເຕັມໄປດ້ວຍພຣະເມດຕາກະຣຸນາ.*

ເພື່ອເນັ້ນໜັກເຖິງຄຸນຄ່າຂອງຄວາມອົດທົນ ແລະ ຄວາມໄວ້ວາງໃຈໃນການຜະເຊີນໜ້າກັບຄວາມຫຍຸ້ງຍາກອັນໃດກໍຕາມທີ່ພວກເຮົາຜະເຊີນ, ຢາໂກໂບໄດ້ຊີ້ໃຫ້ພວກເຮົາເຫັນແບບຢ່າງຂອງບັນດາຜູ້ປະກາດພຣະທັມ (ຜູ້ທໍານວາຍ). ຜູ້ຮັບໃຊ້ຂອງພຣະເຈົ້າຄຸ້ນເຄີຍກັບຄວາມທຸກທໍຣະມານ. ເຖິງແມ່ນວ່າບັນດາຜູ້ທໍານວາຍໄດ້ຮັບຄວາມຍາກລໍາບາກແລະແມ້ກະທັ້ງການຂົ່ມເຫັງ, ພວກເຂົາເຈົ້າບໍ່ໄດ້ຍົກເລີກຍອມແພ້. **<u>ພວກເຂົາເຈົ້າໄດ້ຍືນໝັ້ນຄົງທີ່ຢູ່</u>**.

ໂຢບໄດ້ທົນທຸກທໍຣະມານໂດຍປາສຈາກການຮູ້ເຫດຜົນຕົ້ນຕໍ. ລາວສູນເສັຽຄວາມຮັ່ງມີຂອງລາວ, ລູກຂອງລາວ, ແລະສຸຂພາບຂອງລາວ. ພຣະເຈົ້າຍອມໃຫ້ຊາຕານໂຈມຕີລາວ ແລະບໍ່ໄດ້ອະທິບາຍເຫດຜົນໃຫ້ລາວຮູ້ວ່າເປັນຫຍັງ. ໃນຂນະທີ່ລາວປະສົບກັບການສູນເສັຽຂອງລາວ, ໝູ່ເພື່ອນຂອງລາວໄດ້ມາປອບໂຍນລາວ, ແຕ່ກົງກັນຂ້າມ, ພວກເຂົາເຈົ້າໄດ້ຕໍານິຕິຕຽນລາວດ້ວຍເຫດຜົນຄວາມບາບຂອງລາວທີ່ພວກເຂົາເຈົ້າສົມມຸດເອົາ. ແມ້ກະທັ້ງເມັຽຂອງລາວເອງເລັ່ງໃຫ້ລາວ "***ສາບແຊ່ງພຣະເຈົ້າແລະຕາຍເສັຽເຖີດ***" (ໂຢບ 2:9), ແຕ່ລາວປະຕິເສດບໍ່ເຮັດ. ຢ່າງໃດກໍຕາມ, ໃນຄວາມເຈັບປວດທັງໝົດ, ຄວາມອຸກອັ່ງໃຈ, ແລະຄວາມທຸກທໍຣະມານ, ໂຢບໄດ້ປະຕິເສດທີ່ຈະຕໍານິຕິຕຽນພຣະເຈົ້າ. ລາວອົດທົນກັບຄວາມທຸກລໍາບາກທີ່ມາເຖິງ. **<u>ລາວຢືນໝັ້ນຄົງທີ່ຢູ່</u>, ແລະ <u>ໃນທີ່ສຸດພຣະເຈົ້າກໍໄດ້ຊົງໃຫ້ລາງວັນແກ່ລາວ</u>.**

*ເປັນຫຍັງມັນຈຶ່ງສໍາຄັນຫຼາຍທີ່ພວກເຮົາຍັງຈົດຈໍ່ເຖິງການກັບຄືນມາຂອງອົງພຣະຜູ້ເປັນເຈົ້າ?*

ບັນດາຜູ້ທີ່ເຊື່ອໃນທົ່ວໂລກສືບຕໍ່ທົນທຸກທໍຣະມານກັບຄວາມຍາກລຳບາກອັນຍິ່ງໃຫຍ່. ການກົດຂີ່ຂົ່ມເຫັງແມ່ນອັນຕະລາຍທີ່ຊັດເຈນ ແລະ ປະຈຸບັນສຳລັບຊາວຄຣິສະຕຽນຫຼາຍລ້ານຄົນໃນທຸກວັນນີ້. ແທນທີ່ຈະມີການປົກປ້ອງຄຸ້ມຄອງໃຫ້ຜູ້ທີ່ອາສັຍຢູ່ໃນບັນດາປະເທດເສຣີເຊັ່ນສະຫະຣັດອາເມຣິກາ, ພວກເຂົາເຈົ້າອາສັຍຢູ່ໃນພັຍຂົ່ມຂູ່ຕໍ່ການຂົ່ມເຫັງໃນລະດັບຕ່າງໆ. **ແຕ່<u>ພວກເຂົາເຈົ້າໄດ້ຢືນຍົງຄົງທີ່ຢູ່</u> (stay the course).** *"ພວກເຮົາຖືວ່າເປັນພຣະພອນບັນດາຄົນເຫຼົ່ານັ້ນທີ່ໄດ້ມີຄວາມມານະອົດທົນ"* (ຂໍ້ 11). <u>ບັນດາຄົນທີ່ໄດ້ຮັບພຣະພອນເຫຼົ່ານີ້ໄດ້ຮັບການອະນຸມັດຈາກພຣະເຈົ້າ</u> <u>ແລະຈະໄດ້ຮັບລາງວັນຂອງພຣະອົງ</u>.

*ກຸ່ມຂອງພວກເຮົາມີບົດບາດອັນໃດແດ່ໃນການຊ່ວຍທ່ານຍອມຈຳນົນຕໍ່ພຣະເຈົ້າແລະຕ້ານກັບມານຮ້າຍ?*

## ນຳໃຊ້ໃນຊີວິດ

ພວກເຮົາບໍ່ຮູ້ວ່າອະນາຄົດຈະເປັນແນວໃດສຳລັບພວກເຮົາ, ແຕ່ພວກເຮົາສາມາດຕອບສນອງການທ້າທາຍໄດ້ດ້ວຍຄວາມຊ່ວຍເຫລືອຈາກພຣະເຈົ້າ. ຈົ່ງເລືອກເອົານຶ່ງໃນການນຳໃຊ້ໃນຊີວິດຕໍ່ລົງໄປນີ້:

- **ຈົ່ງອະທິຖານດ້ວຍການສັຣເສີນ.** ຈົ່ງໄວ້ວາງໃຈໃນພຣະເຈົ້າ, ຮູ້ວ່າການກັບຄືນມາຂອງອົງພຣະຄຣິດຈະນຳການຫຼ່ງທັມຢ່າງເຕັມປ່ຽມ, ອິສຣະພາບ, ແລະ ການປົດປ່ອຍ. ຈົ່ງພິຈາລະນາວິທີທີ່ທ່ານສາມາດອະທິຖານແລະສັຣເສີນພຣະເຈົ້າໃນປະຈຸບັນສຳລັບວິທີການທີ່ພຣະອົງໄດ້ຊົງກະທຳຢູ່ໃນຊີວິດຂອງທ່ານ.
- **ຈົ່ງອະທິຖານເທິງແຜນການຂອງທ່ານ.** ຈົ່ງໄວ້ວາງໃຈໃນພຣະເຈົ້າໃນທຸກໆລາຍການ, ການນັດພົບ, ແລະແຜນການຂອງທ່ານ. ຖ້າຫາກແຜນການເຫຼົ່ານັ້ນປ່ຽນແປງ, ຈົ່ງຂອບພຣະຄຸນພຣະອົງ, ແລະຈົ່ງອະທິຖານເພື່ອຈະເບິ່ງວິທີການທີ່ພຣະອົງຊົງຢູ່ໃນການເຮັດວຽກຕລອດວັນຂອງທ່ານ.
- **ຈົ່ງອະທິຖານເພື່ອຄຣິສຕະຈັກທີ່ຖືກຂົ່ມເຫັງ.** ພວກເຮົາຕ້ອງໄດ້ເຮັດຫຼາຍກວ່າຄວາມອົດທົນຂອງເດັກຍິງຫນຸ່ມຜູ້ທີ່ມີຄວາມກ້າຫານທີ່ຈະຢືນຢູ່ໃນຄວາມເຊື່ອຂອງນາງ. ຈົ່ງໃຊ້ເວລາໃນການອະທິຖານເພື່ອໃຫ້ນາງແລະຜູ້ທີ່ເຊື່ອຄົນອື່ນໆໃນໂລກຂອງພວກເຮົາທີ່ຜະເຊີນກັບການຂົ່ມເຫັງສຳລັບຄວາມເຊື່ອຂອງພວກເຂົາເຈົ້າໃນພຣະເຢຊູ. ກວດເບິ່ງ <u>ຄະນະກັມມະການພາຣະກິດລະຫວ່າງປະເທດ</u> **IMb.org** (**I**nternational **M**ission **B**oard) ຂອງພວກເຮົາສຳລັບສະຖານທີ່ແລະວິທີການສະເພາະທີ່ຈະອະທິຖານເພື່ອ.

ພວກເຮົາອາດຈະບໍ່ຜະເຊີນກັບອະນາຄົດປະເພດທີ່ເປັນໄປບໍ່ໄດ້ທີ່ເພື່ອນຂອງພວກເຮົາ ມະນຸດຫິມມະ (thesnowman) ທີ່ໄດ້ປະເຊີນຫນ້າ. ແຕ່ວ່າພວກເຮົາຈະຜະເຊີນໜ້າກັບສະຖານະການທີ່ພວກເຮົາບໍ່ຄາດຄິດເຫັນມາກ່ອນ ແລະ ທາງເລືອກຂອງພວກເຮົາເບິ່ງຄືວ່າບໍ່ຫນ້າສົນໃຈ. ມັນແມ່ນຢູ່ໃນຊ່ວງເວລານັ້ນລະ ທີ່ມັນເປັນທີ່ຍິ່ງໃຫຍ່ທີ່ພວກເຮົາຈະຫັນໄປຫາພຣະເຈົ້າ. **<u>ພຣະອົງຊົງມີແຜນການສຳລັບຊີວິດຂອງພວກເຮົາ</u>, <u>ແລະມັນເປັນແຜນການທີ່ດີ</u>!**

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ** https://ulsb.org/sunday-school-2/ **ແປໂດຍ SSK**